ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ **1941** /ຜ-ຟຟລ
ນະຄອນຫຼວງວຽງຈັນ, ລົງວັນທີ **15 MAY 2026**

ໜັງສືລາຍງານ

ຮຽນ: ບັນດາທ່ານຜູ້ຖືຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,
ເລື່ອງ: ການປຽບທຽບການດັດແກ້ກົດລະບຽບ ຂອງ ຜ-ຟຟລ ລະຫວ່າງສະບັບ ຄັ້ງທີ 15 (ເກົ່າ) ແລະ ສະບັບປັບປຸງຄັ້ງທີ 16 (ໃໝ່).

- ອີງຕາມ ກົດລະບຽບ ຂອງ ຜ-ຟຟລ ສະບັບປັບປຸງຄັ້ງທີ 15 ສະບັບລົງວັນທີ 20/06/2025.
- ອີງຕາມ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຄັ້ງວັນທີ 29/04/2026 .

ເນື່ອງຈາກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຄັ້ງວັນທີ 29/04/2026 ຜ່ານມາໄດ້ມີວາລະການພິຈາລະນາການດັດແກ້ກົດລະບຽບບໍລິສັດ ສະບັບປັບປຸງຄັ້ງທີ 16 ໃນວາລະທີ 8 ທີ່ໄດ້ເປີດເຜີຍໃນໜັງສືແຈ້ງເຊີນ ສະບັບເລກທີ 1557/ຜ-ຟຟລ, ລົງວັນທີ 27 ເມສາ 2026 ແລ້ວນັ້ນ ແລະ ອີງຕາມຄຳເຫັນຂອງຜູ້ຖືຮຸ້ນລາຍຍ່ອຍທີ່ໄດ້ປະກອບຄຳເຫັນໃນທີ່ປະຊຸມຄັ້ງວັນທີ 29/04/2026 “ໃຫ້ ຜ-ຟຟລ ສ້າງຕາຕະລາງປຽບທຽບເນື້ອໃນ ລະຫວ່າງ ກົດລະບຽບບໍລິສັດ (ສະບັບເກົ່າ) ແລະ ຮ່າງກົດລະບຽບບໍລິສັດ (ສະບັບປັບປຸງ ຄັ້ງທີ 16) ເພື່ອໃຫ້ເຫັນຄວາມແຕກຕ່າງ, ມາດຕາ ທີ່ດັດແກ້ ຫຼື ມາດຕາ ທີ່ສ້າງໃໝ່ ເພື່ອສ້າງຄວາມເຂົ້າໃຈໃຫ້ຜູ້ຖືຮຸ້ນ ເພີ່ມເຕີມ".

ສະນັ້ນ, ຜ-ຟຟລ ຂໍຖືເປັນກຽດຊີ້ແຈງລາຍລະອຽດ ຄວາມແຕກຕ່າງການດັດແກ້ກົດລະບຽບ ຂອງ ຜ-ຟຟລ ລະຫວ່າງສະບັບ ຄັ້ງທີ 15 (ເກົ່າ) ແລະ ສະບັບປັບປຸງຄັ້ງທີ 16 (ໃໝ່), ເຊິ່ງການປັບປຸງກົດລະບຽບຄັ້ງນີ້ ແມ່ນອີງຕາມວຽກງານປະຕິຮູບລັດວິສາຫະກິດຂະແໜງພະລັງງານ ແລະ ບໍ່ແຮ່ ປະຈຳປີ ຜ-ຟຟລ, ເພື່ອເປັນການປັບປຸງໃຫ້ສອດຄ່ອງຕາມຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານ ສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ລະບຽບກົດໝາຍຂອງ ສປປ ລາວ ທີ່ກ່ຽວຂ້ອງ. ດັ່ງນັ້ນ, ຜ-ຟຟລ ຈຶ່ງໄດ້ປັບປຸງກົດລະບຽບຂອງບໍລິສັດ ເພື່ອໃຫ້ມີເນື້ອໃນ ແລະ ຫຼັກການຄົບຖ້ວນສົມບູນຍິ່ງຂຶ້ນ, ເຊິ່ງໄດ້ມີການປັບປຸງກົດລະບຽບບໍລິສັດຈາກ 9 ໝວດ ແລະ 28 ມາດຕາ ມາເປັນທັງໝົດ 14 ໝວດ ແລະ 71 ມາດຕາ.

ໃນນັ້ນ, ມີການສ້າງໝວດໃໝ່ເພີ່ມຂຶ້ນທັງໝົດ 5 ໝວດ, ເພີ່ມມາດຕາໃໝ່ທັງໝົດ 47 ມາດຕາ ແລະ ມີການປັບປຸງເນື້ອໃນຂອງມາດຕາເດີມອີກຈຳນວນ 9 ມາດຕາ ເພື່ອໃຫ້ສອດຄ່ອງກັບກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຫຼັກການການຄຸ້ມຄອງບໍລິຫານທີ່ດີ ຂອງບໍລິສັດຈົດທະບຽນ.

ກໍລະນີຜູ້ຖືຮຸ້ນທ່ານໃດປະສົງຈະປະກອບຄຳເຫັນເພີ່ມເຕີມ, ສາມາດສົ່ງຄຳເຫັນມາຍັງ ຜ-ຟຟລ **ກ່ອນວັນທີ 29 ພຶດສະພາ 2026** ຜ່ານອີເມວ: edlgenhq@edlgen.com.la. ຜ-ຟຟລ ຈະນຳເອົາຄຳເຫັນດັ່ງກ່າວໄປຄົ້ນຄວ້າ ແລະ ພິຈາລະນາປັບປຸງເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນໃນຄັ້ງຕໍ່ໄປ.

ລາຍລະອຽດການດັດແກ້ກົດລະບຽບຂອງ ຜ-ຟຟລ ລະຫວ່າງສະບັບ ຄັ້ງທີ 15 (ເກົ່າ) ແລະ ສະບັບປັບປຸງຄັ້ງທີ 16 (ໃໝ່) ມີດັ່ງນີ້:

❖ **ສະຫຼຸບພາບລວມການດັດແກ້**

ລາຍການ	ສະບັບປັບປຸງຄັ້ງທີ 15	ສະບັບປັບປຸງຄັ້ງທີ 16
ຈຳນວນມາດຕາ	28 ມາດຕາ	71 ມາດຕາ
ຈຳນວນໝວດ	9 ໝວດ	14 ໝວດ
ລັກສະນະ	ກຳນົດພື້ນຖານ	ເພີ່ມລະບົບການບໍລິຫານ, ການຄຸ້ມຄອງບໍລິຫານ, ໂຄງປະກອບການຈັດຕັ້ງ, ສິດຂອງຜູ້ຖືຮຸ້ນ ແລະ ການເປີດເຜີຍຂໍ້ມູນ
ຈຸດເດັ່ນ	ເນື້ອໃນລວມ	ແຍກລາຍລະອຽດຊັດເຈນ ຕາມກົດໝາຍ ແລະ ຫຼັກການຄຸ້ມຄອງບໍລິຫານທີ່ດີ.

❖ **ຕາຕະລາງປຽບທຽບ ລະຫວ່າງ ກົດລະບຽບ ສະບັບປຸງຄັ້ງທີ 15 (ເກົ່າ) ແລະ ສະບັບປັບປຸງຄັ້ງທີ 16 (ໃໝ່)**

ມາດຕາສະບັບຄັ້ງທີ 15 (ເກົ່າ)	ມາດຕາສະບັບຄັ້ງທີ 16 (ໃໝ່)	ລັກສະນະການປ່ຽນແປງ	ລາຍລະອຽດ
ມາດຕາ 1 ຈຸດປະສົງ	ມາດຕາ 1 ຈຸດປະສົງ	ປັບປຸງ	ປັບປຸງເນື້ອໃນໃຫ້ຄົບຖ້ວນຂຶ້ນ ໂດຍເພີ່ມຫຼັກການຄຸ້ມຄອງບໍລິຫານ, ການບໍລິຫານ, ແລະ ສິດ ແລະ ໜ້າທີ່ຂອງຜູ້ຖືຮຸ້ນ.
ມາດຕາ 2-3	ມາດຕາ 2-3	ຄົງເດີມ	ຄົງເນື້ອໃນຫຼັກຂອງຊື່ບໍລິສັດ ແລະ ຊື່ຫຍໍ້, ແລະ ວັດຖຸປະສົງ ຂອງ ການດຳເນີນທຸລະກິດ
ບໍ່ມີ	ມາດຕາ 4 ສິດ ແລະ ໜ້າທີ່ຂອງບໍລິສັດ	ໃໝ່	ເພີ່ມຂໍ້ກຳນົດສິດ, ອຳນາດ ແລະ ໜ້າທີ່ຂອງບໍລິສັດ
ມາດຕາ 4 ສຳນັກງານໃຫຍ່ ແລະ ສາຂາ	ມາດຕາ 5 ສຳນັກງານໃຫຍ່ ແລະ ສາຂາ	ປັບປຸງ	ປັບປຸງ ເພີ່ມລາຍລະອຽດ ສຳນັກງານໃຫຍ່ ແລະ ສາຂາ
ບໍ່ມີ	ມາດຕາ 6 ຮູບແບບຂອງບໍລິສັດ	ໃໝ່	ເພີ່ມຂໍ້ມູນຮູບແບບຂອງບໍລິສັດ
ບໍ່ມີ	ມາດຕາ 7-11	ໃໝ່	ເພີ່ມ Logo, Slogan, Vision, Mission
ມາດຕາ 5 ທຶນຈົດທະບຽນ	ມາດຕາ 12 ທຶນຈົດທະບຽນ	ປັບປຸງ	ເພີ່ມເນື້ອໃນ “ຜ-ຟຟລ ຮັບປະກັນໃຫ້ມີທຶນຈົດທະບຽນບໍ່ໃຫ້ຫຼຸດຕາມຈຳນວນ ທີ່ລະບຽບກົດໝາຍກຳນົດໄວ້ໃນແຕ່ລະໄລຍະ ຜ-ຟຟລ ຮັບປະກັນໃຫ້ມີທຶນພຽງພໍ ແລະ ນຳໃຊ້ຕາມລະບຽບກົດໝາຍຂອງ ສປປ ລາວ”
ບໍ່ມີ	ມາດຕາ 13, 15-19	ໃໝ່	ກຳນົດການປ່ຽນແປງທຶນຈົດທະບຽນ, ການຢັ້ງຢືນການຖືຮຸ້ນ, ການຖອກທຶນຈົດທະບຽນ, ໂຄງປະກອບຜູ້ຖືຮຸ້ນ, ສິດ ແລະ ໜ້າທີ່ຂອງຜູ້ຖືຮຸ້ນ
ມາດຕາ 6 ຮຸ້ນ	ມາດຕາ 14	ຄົງເດີມ	ຄົງເນື້ອໃນເດີມ
ມາດຕາ 7 ການໂອນຮຸ້ນ	ມາດຕາ 20	ປັບປຸງ	ປັບໃຫ້ສອດຄ່ອງລະບຽບຫຼັກຊັບ

ມາດຕາສະບັບຄັ້ງທີ 15 (ເກົ່າ)	ມາດຕາສະບັບຄັ້ງທີ 16 (ໃໝ່)	ລັກສະນະການປ່ຽນແປງ	ລາຍລະອຽດ
ມາດຕາ 8 ຜູ້ສ້າງຕັ້ງ	ມາດຕາ 21	ຄົງເດີມ	ປັບພຽງຮູບແບບ
ບໍ່ມີ	ມາດຕາ 22	ໃໝ່	ໂຄງປະກອບການຈັດຕັ້ງ
ມາດຕາ 13 ກອງປະຊຸມຜູ້ຖືຮຸ້ນ	ມາດຕາ 23	ປັບປຸງ	ຂະຫຍາຍເນື້ອໃນກອງປະຊຸມສາມັນຜູ້ຖືຮຸ້ນ/ວິສາມັນຜູ້ຖືຮຸ້ນ
ມາດຕາ 14 ອົງປະຊຸມ	ມາດຕາ 24-28	ໃໝ່	ເພີ່ມມາດຕາກ່ຽວກັບການເຂົ້າປະຊຸມ, ການແຈ້ງປະຊຸມ, ເງື່ອນໄຂສຳລັບການດຳເນີນກອງປະຊຸມຜູ້ຖືຮຸ້ນ, ການລົງຄະແນນສຽງ ແລະ ມະຕິຂອງກອງປະຊຸມຜູ້ຖືຮຸ້ນ, ການສະໜີລົບລ້າງມະຕິ ຂອງກອງປະຊຸມຜູ້ຖືຮຸ້ນ
ມາດຕາ 9-12 ການບໍລິຫານຈັດການ	ມາດຕາ 29-42	ໃໝ່	ເພີ່ມມາດຕາກ່ຽວກັບໂຄງສ້າງສະພາບໍລິຫານ, ເງື່ອນໄຂສະພາບໍລິຫານ, ການແຕ່ງຕັ້ງ, ສິດ ແລະ ໜ້າທີ່, ກອງປະຊຸມ, ປະທານສະພາ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ
ບໍ່ມີ	ມາດຕາ 43-47	ໃໝ່	ເພີ່ມມາດຕາກ່ຽວກັບ ໂຄງປະກອບຂອງຄະນະຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍ, ຜູ້ຊ່ວຍຜູ້ອຳນວຍການຝ່າຍ , ຄະນະພະແນກ, ຄະນະເຂື່ອນ, ຄະນະຂະແໜງ, ໜ່ວຍງານ ແລະ ພະນັກງານ
ບໍ່ມີ	ມາດຕາ 48-55	ໃໝ່	ເພີ່ມມາດຕາກ່ຽວກັບການບໍລິຫານຈັດການ: ການຄຸ້ມຄອງພະນັກງານ, ນະໂຍບາຍ ແລະ ສະຫວັດດີການຂອງພະນັກງານ, ລະບອບເງິນເດືອນ ແລະ ກົນໄກການບໍລິຫານຄວາມສ່ຽງ
ມາດຕາ 15 ການແບ່ງເງິນປັນຜົນ	ມາດຕາ 56	ປັບປຸງ	ເພີ່ມ ກຳນົດວັນຈ່າຍເງິນປັນຜົນ
ມາດຕາ 16 ຄັງສຳຮອງ ແລະ ການນຳໃຊ້ຄັງສຳຮອງ	ມາດຕາ 57	ປັບປຸງ	ເພີ່ມລາຍລະອຽດເນື້ອໃນໃຫ້ຊັດເຈນຂຶ້ນ
ມາດຕາ 17-18	ມາດຕາ 58-59	ຄົງເດີມ	ການແກ້ໄຂຂໍ້ຂັດແຍ່ງ, ການຍຸບເລີກ ແລະ ການຊຳລະສະສາງ
ມາດຕາ 19-21	ມາດຕາ 60-62	ຄົງເດີມ	ກ່ຽວກັບຜູ້ມີສິດອຳນາດໃນການລົງລາຍເຊັນຜູກພັນບໍລິສັດ, ເນື້ອໃນທີ່ຕ້ອງປະກອບເຂົ້າໃນຂໍ້ຄວາມແຈ້ງຂຶ້ນທະບຽນວິສາຫະກິດ ຫຼື ເປີດເຜີຍຕໍ່ມວນຊົນ ແລະ ບາງຂໍ້ກຳນົດເພີ່ມເຕີມອື່ນໆ
ມາດຕາ 22-23	ມາດຕາ 63-64	ຄົງເດີມ	ປີການບັນຊີ (ຮອບບັນຊີ), ການສ້າງເອກະສານລາຍງານການເງິນ
ມາດຕາ 24 ການກວດສອບ	ມາດຕາ 65	ປັງປຸງ	ເພີ່ມລາຍລະອຽດເພີ່ມເຕີມກ່ຽວກັບການກວດສອບພາຍໃນ ແລະ ການກວດສອບພາຍນອກ

ມາດຕາສະບັບຄັ້ງທີ 15 (ເກົ່າ)	ມາດຕາສະບັບຄັ້ງທີ 16 (ໃໝ່)	ລັກສະນະການປ່ຽນແປງ	ລາຍລະອຽດ
ບໍ່ມີ	ມາດຕາ 66	ໃໝ່	ການເປີດເຜີຍຂໍ້ມູນຂ່າວສານ ແລະ ການປະກາດແກ່ມວນຊົນ
ມາດຕາ 25-26	ມາດຕາ 67-68	ຄົງເດີມ	ການເພີ່ມ ແລະ ຫຼຸດທຶນ
ບໍ່ມີ	ມາດຕາ 69-70	ໃໝ່	ເພີ່ມມາດຕາກ່ຽວກັບການດັດແກ້ກົດລະບຽບ ແລະ ການລະເມີດ ແລະ ມາດຕະການຂອງຜູ້ລະເມີດ
ມາດຕາ 27ມະຕິ ແລະ ບັນທຶກກອງປະຊຸມ ຂອງສະພາ	ມາດຕາ 33: ກອງປະຊຸມສະພາບໍລິຫານ, ມະຕິ ແລະ ບົດບັນທຶກກອງປະຊຸມ ຂອງສະພາບໍລິຫານ	ປັບປຸງ	ປັບປຸງເນື້ອໃນໃຫ້ລະອຽດ ແລະ ຄົບຖ້ວນຂຶ້ນ ໂດຍເພີ່ມຂໍ້ກຳນົດກ່ຽວກັບ: (1) ອົງປະຊຸມສະພາບໍລິຫານຕ້ອງມີຢ່າງໜ້ອຍ 2/3 ຂອງສະມາຊິກທັງໝົດ; (2) ການມອບໝາຍຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ; (3) ການລາຍງານຜົນປະຊຸມຂອງຜູ້ຕາງໜ້າພາຍໃນ 5 ວັນລັດຖະການ; (4) ການກຳນົດໃຫ້ຈັດກອງປະຊຸມຢ່າງໜ້ອຍ 4 ຄັ້ງຕໍ່ປີ; (5) ການປະຊຸມວິສາມັນ ແລະ ມະຕິວຽນເຊັນຜ່ານຮູບແບບການສື່ສານ; (6) ການຫ້າມລົງຄະແນນສຽງໃນວາລະທີ່ມີຜົນປະໂຫຍດຂັດແຍ່ງ; ແລະ (7) ການເກັບຮັກສາບົດບັນທຶກກອງປະຊຸມໄວ້ທີ່ສຳນັກງານໃຫຍ່ ເພື່ອໃຫ້ຜູ້ຖືຮຸ້ນສາມາດເຂົ້າກວດສອບໄດ້ ຍົກເວັ້ນຂໍ້ມູນຄວາມລັບທາງການຄ້າຂອງບໍລິສັດ
ມາດຕາ 28	ມາດຕາ 71 ຜົນສັກສິດ	ປັງປຸງ	ເພີ່ມເນື້ອໃນໃຫ້ຄົບຖ້ວນຊັດເຈນຍິ່ງຂຶ້ນ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານ ເພື່ອພິຈາລະນາຕາມເຫັນສົມຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,

ຜູ້ອຳນວຍການໃຫຍ່

ບໍລິສັດ ສະຫິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່